# ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 06 ກັນຍາ 2020 (09-06-2020)

---

## ຈັດພຣະເຈົ້າໄວ້ອັນດັບນຶ່ງ

***ເມື່ອໃດຄຳຕອບງ່າຍໆເຮັດໃຫ້ທ່ານຕົກຕະລຶງ?***

**ຈຸດສຳຄັນໃນບົດຮຽນ:** ພຣະເຈົ້າຕ້ອງເປັນທີນຶ່ງໃນທຸກໆດ້ານຂອງຊີວິດ.

**ພຣະຄັມພີຕອບສນອງຕໍ່ຊີວິດ:** ທ່ານເຄີຍຮູ້ສຶກຜິດຫວັງ, ເຮັດໃຫ້ໃຈຮ້າຍ, ເຈັບປວດ, ສັບສົນມາກ່ອນບໍ່? ພວກເຮົາທຸກຄົນເຄີຍ. ຊີວິດມາກັບບັນຫາ-ແລະບັນຫານີ້ສາມາດສະແດງອອກມາໃນຫຼາຍໆທາງ. ເວລາຫຼາຍບັນຫາເກີດຂຶ້ນພໍແລ້ວ, ຊີວິດກໍເລີ່ມຮູ້ສຶກເໝືອນການເພພັງຢ່າງໃຫ່ຽຫຼວງອັນນຶ່ງ.

ຊາຍຄົນນຶ່ງໄປພົບໝໍຍ້ອນວ່າເຈັບໄປໝົດທັງຕົວ. ຕັ້ງແຕ່ເທິງຫົວຈົນຮອດພື້ນຕີນ, ລາວຮູ້ສຶກເຈັບໄປໝົດ. ແຕ່ລະບ່ອນເມື່ອລາວແຕະກໍຈະເຈັບຢ່າງແຮງ. ທ່ານໝໍແນມເບິ່ງລາວແລະເວົ້າວ່າ, "ເອີ, ອັນນີ້ກໍແປກ. ຂ້າພະເຈົ້າບໍ່ເຫັນມີຫັຽງຜິດປົກກະຕິ." ໝໍຮີບບອກຊາຍຄົນນັ້ນແຕະບ່ອນຕ່າງໆຕາມຕົວຂອງລາວ, ລາວຮ້ອງຂຶ້ນດ້ວຍຄວາມເຈັບປວດຢ່າງແຮງ. ຫຼັງຈາກນັ້ນຄາວນຶ່ງ, ທ່ານໝໍຈຶ່ງຮູ້ອາການຂອງບັນຫາ. "ທ່ານເອີຍ," ທ່ານໝໍເອີ່ຍຂຶ້ນ, ມີພິລຸດໜ້ອຍນຶ່ງ, "ຂໍ້ມືທ່ານຂັ່ນ".

ຂນະທີ່ມັນຮູ້ສຶກຄືກັບວ່າທຸກສິ່ງຜິດປົກກະຕິໄປໝົດ, ທີ່ແທ້ມີພຽງຢ່າງດຽວ. ນີ້ກໍເປັນຈິງກັບຊີວິດຂອງເຮົາເໝືອນກັນ.ເຖິງແມ່ນວ່າທຸກສິ່ງໃນຊີວິດເບິ່ງເໝືອນພັງໄປໝົດກໍຕາມ, ຄຳຕອບອອກມາພາຍໃຕ້ຄຳເວົ້າເຫຼົ່ານີ້: ຈັດພຣະເຈົ້າໄວ້ອັນດັບນຶ່ງ. ການເຮັດແນວນີ້ເປັນຜົນດີຕໍ່ທຸກສິ່ງ.

**ພຣະຄັມພີກ່າວວ່າແນວໃດ :** ອົພຍົບ 20:1-6; ເພງສັຣເສີນ 16:1-4ກ; 9-11 ( ເບິ່ງຕາມຂໍ້ 1, 2, 3 )

### ການສຶກສາພຣະຄັມພີ

**1. <u>ອົພຍົບ 20:1-6.</u>**

*1ພຣະຜູ້ເປັນເຈົ້າຊົງກ່າວຖ້ອຍຄຳຕໍ່ໄປນີ້ວ່າ 2"ເຮົາແມ່ນພຣະຜູ້ເປັນເຈົ້າຂອງເຈົ້າ ຜູ້ໄດ້ນຳພາພວກເຈົ້າອອກຈາກປະ*
*ເທດເອຢິບ ຄືອອກຈາກປະເທດທີ່ພວກເຈົ້າໄດ້ຕົກເປັນທາດ. 3ພວກເຈົ້າຢ່າມີພຣະອື່ນນອກຈາກເຮົາ. 4ພວກເຈົ້າ*
*ຢ່າເຮັດຮູບໂຄລົບສຳລັບຕົນ ຫຼືຮູບສິ່ງນຶ່ງສິ່ງໃດທີ່ມີຢູ່ໃນສວັນຊັ້ນຟ້າ ໃນແຜ່ນດິນ ຫຼື ໃນນ້ຳລຸ່ມແຜ່ນດິນ. 5ຢ່າຂາບ*
*ໄຫວ້ຮູບເຫຼົ່ານັ້ນ, ເພາະວ່າເຮົາເປັນພຣະຜູ້ເປັນເຈົ້າຂອງພວກເຈົ້າແລະເປັນພຣະເຈົ້າຜູ້ຫວງແຫນພວກເຈົ້າເຮົາຈະ*
*ລົງໂທດລູກຫຼານຜູ້ທີ່ຊັງເຮົາເຖິງສາມສີ່ຊົ່ວອາຍຸຄົນ 6ແຕ່ຈະສະແດງຄວາມຮັກໝັ້ນຄົງຕໍ່ຜູ້ທີ່ຮັກເຮົາ ແລະ ຕໍ່ຜູ້ທີ່*
*ປະພຶດຕາມພຣະບັນຍັດຂອງເຮົາ ຫຼາຍຊົ່ວອາຍຸພັນຄົນ.*

ພວກເຮົາຕ້ອງຖືພຣະເຈົ້າເປັນອັນດັບນຶ່ງ ເພາະວ່າພຣະອົງເປັນພຣະເຈົ້າພຽງຜູ້ດຽວ. ຖ້ອຍຄຳນີ້ກວມໄປກ້ວາງເກີນກວ່າເຮົາຄິດ. ແນ່ນອນ, ພວກເຮົາສ່ວນຫຼາຍອາດເວົ້າວ່າ, "ພຣະເຈົ້າມາກ່ອນໃນຊີວິດຂ້ອຍ." ແຕ່ພຣະອົງເປັນດັ່ງນັ້ນແທ້ບໍ່? ສຳລັບບາງຄົນ, ສິ່ງ "ແລກ" ໃນຊີວິດແມ່ນເງິນ, ການງານ, ຄວາມມ່ວນຊື່ນ, ການເມືອງ, ຂ່າວສັງຄົມບຸກຄົນ, ຫຼືເຄື່ອງຂອງພິເສດອັນໃດອັນນຶ່ງ. ແຕ່ໜ້າເສັຍດາຍ, "ສິ່ງແລກ"-ພວກນີ້ ຈັດເປັນສິ່ງສູງສົ່ງເໜືອສິ່ງອື່ນໃດທີ່ແຜ່ຫຼາຍໃນສັງຄົມຂອງເຮົາ. ເມື່ອເຮົາໃຫ້ການໂຄຣົບ, ສິດ, ແລະ ການນະມັສການຜູ້ໃດຜູ້ນຶ່ງຫຼືສິ່ງໃດສິ່ງນຶ່ງຊຶ່ງພຣະເຈົ້າອົງດຽວສົມຄວນໄດ້ຮັບນັ້ນ, ພຣະຄັມພີບອກດ້ວຍຄຳດຽວຄື: ການຫຼົງບູຊາ.

ຈິງຢູ່ໃນວັທນະທັມຂອງເຮົາ ເຮົາບໍ່ກາບໄຫວ້ພຣະໄມ້ ຫຼືຮູບໂຄຣົບ. ພວກເຮົາບໍ່ໄດ້ມີພິທີກັມຫຼືການຂາບໄຫວ້ໃດໆທັງສິ້ນ. ການທີ່ບໍ່ໄດ້ຂາບໄຫວ້ດ້ວຍກາຍກໍດີຢູ່, ແຕ່ຍັງມີບາງສິ່ງນຳເຮົາໄປໃນທາງຜິດກໍເປັນໄດ້. ແມ່ນຢູ່ເຮົາບໍ່

ໄດ້ຍົກມືນັບ ຫຼືກົ້ມຫົວໃຫ້ ກິລາ, ການງານ, ການເມືອງ, ຂ່າວສານມວນຊົນ, ບຸກຄົນ, ຫຼື ເຄື່ອງຂອງພິເສດໃດນຶ່ງ, ພວກເຮົາອາດຄິດພຽງວ່າສິ່ງເຫຼົ່ານັ້ນບໍ່ໄດ້ແມ່ນພຣະທຽມ. ແຕ່ພວກເຮົາກໍຍັງອາດເຊື່ອພຣະເຈົ້າຜິດພັ້ຽນຈາກຈຸດເດີມທີ່ວ່າພຣະເຈົ້າເປັນອັນດັບນຶ່ງໃນຊີວິດຂອງເຮົາ. ເຖິງແມ່ນພຣະທຽມບໍ່ສຳຄັນ ແຕ່ກໍຍັງປາກົດມີໃນວັທນະທັມ, ໃນຫົວຄິດຂອງເຮົາຢູ່. ພຣະທຽມອາດເປັນບຸກຄົນ, ສະຖານທີ່, ຫຼືສິ່ງຂອງທີ່ເຂົ້າມາແທນຄວາມສັກສິດຂອງພຣະເຈົ້າໃນຊີວິດເຮົາ.

| |
|---|
| *ບ່ອນໃດແດ່ທີ່ເຮົາເຫັນຕົວຢ່າງພຣະທຽມໃນເຮືອນປະເພດນີ້ໃນວັທນະທັມຂອງເຮົາ?* |

ພຣະເຈົ້າຮຽກຮ້ອງໃຫ້ເຮົາມອບຕົວຂອງເຮົາໃຫ້ພຣະອົງກ່ອນ ເພາະພຣະອົງຜູ້ດຽວເປັນພຣະເຈົ້າ. ໃນພຣະອົງຜູ້ດຽວເຮົາສາມາດພົບຊີວິດຈິງ, ທັງໃນໂລກນີ້ແລະໂລກໜ້າ. ຖານະກະສັດ, ພຣະອົງຊົງປະທັບເໜືອທຸກສິ່ງ. ພຣະອົງປົກຄອງທຸກສິ່ງ. ບົດບັນທຶກເຣື່ອງອານາຈັກສວັນຂອງພຣະເຈົ້າ ແມ່ນການສະແດງໃຫ້ເຫັນເຖິງການປົກຄອງທຸກສ່ວນຂອງຊີວິດ. ການປົກຄອງຂອງພຣະເຈົ້າບໍ່ໄດ້ຢັ່ງຮາກຢູ່ທີ່ ອຳນາດ, ເລ້ຫຼ່ຽມ, ຫຼື ຄວາມໂລບ; ການປົກຄອງຂອງພຣະເຈົ້າມີຮາກຖານຢູ່ໃນຄວາມຮັກຂອງພຣະອົງ.

ການເອົາພຣະອົງເປັນນ້ຳເບີນຶ່ງໃນຊີວິດເຮົາແມ່ນການດຳເນີນຊີວິດເນັ້ນດ້ວຍຄວາມຮັກ ຊຶ່ງເກີດຈາກວິນຍານແຫ່ງຄວາມກະຕັນຍູ. ຫຼາຍຄົນທີ່ສຶກສາ ຫຼືເທສນາເຣື່ອງພຣະບັນຍັດສິບປະການ ມັກຂ້າມຂໍ້ພຣະຄັມພີເປີດຫົວເຣື່ອງຂອງອົພຍົບບົດ 20. ກ່ອນພຣະເຈົ້າປະທານພຣະບັນຍັດສິບປະການ, ພຣະອົງໄດ້ຢ້ຳເຕືອນຊາວອິສຣາເອນເຖິງສິ່ງທີ່ພຣະອົງໄດ້ກະທຳເພື່ອເຂົາກ່ອນ. *"ເຮົາແມ່ນພຣະຜູ້ເປັນເຈົ້າຂອງພວກເຈົ້າຜູ້ໄດ້ນຳພາພວກເຈົ້າອອກຈາກປະເທດເອຢິບຄືອອກຈາກປະເທດທີ່ພວກເຈົ້າໄດ້ຕົກເປັນທາດ" (ຂໍ້ 2).* ກ່ອນທີ່ພຣະເຈົ້າຈະລົງມືຊຽນພຣະບັນຍັດຂໍ້ໃດຂໍ້ນຶ່ງ, ພຣະອົງຢ້ຳເຕືອນຊາວອິສຣາເອນເຖິງການໄຖ່ແລະອິສຣະພາບທີ່ພຣະອົງມອບໃຫ້. ຄວາມກະຕັນຍູຕໍ່ພຣະອົງໃນສິ່ງທີ່ພຣະອົງໄດ້ກະທຳແມ່ນການຮັບໃຊ້ພຣະອົງເປັນຮາກຖານຂອງການຈັດພຣະອົງເປັນນ້ຳເບີນຶ່ງ. ບໍ່ຕ້ອງຢ້ານ. ບໍ່ເປັນທາດ. ບໍ່ໄດ້ບັງຄັບໃຫ້ນະມັສການ. ບໍ່ແມ່ນ. ຕາມທຳນຽມຄວາມກະຕັນຍູ ສຳລັບອິສຣະພາບທີ່ພຣະອົງໄດ້ມອບໃຫ້ເຂົານັ້ນຄືພຣະເຈົ້າຮຽກຮ້ອງໃຫ້ຖວາຍກຽດແດ່ພຣະອົງກ່ອນ.

ພຣະອົງຮຽກຮ້ອງພວກເຮົາແບບດຽວກັນໃນທຸກວັນນີ້. ການນະມັສການຕາມກົດບໍ່ແມ່ນການນະມັສການ. ການນະມັສການຕາມຄຳສັ່ງບໍ່ແມ່ນການນະມັສການ. ການຖວາຍກຽດຕາມຄຳສັ່ງບໍ່ແມ່ນການໃຫ້ກຽດ. ການປະຕິບັດພາຍນອກບໍ່ແມ່ນການປະຕິບັດທີ່ບົ່ງບອກເຖິງການຖວາຍກຽດດ້ວຍຄວາມຈິງໃຈສເມີ. ເມື່ອພຣະເຈົ້າບອກໃຫ້ເຮົາເອົາພຣະອົງເປັນນ້ຳເບີນຶ່ງແມ່ນພຣະອົງຕ້ອງການຫົວໃຈຂອງພວກເຮົາ. ຖ້າພວກເຮົາມອບໃຈຂອງເຮົາໃຫ້ພຣະອົງ, ພຣະອົງຊາບແລ້ວວ່າການກະທຳຈະຕາມມາ.

| |
|---|
| ***ສິ່ງຂອງໃນຊີວິດເຮົາກາຍເປັນຮູບໂຄຣົບໄດ້ແນວໃດ?*** |

## 2. <u>ເພງສັຣເສີນ 16:1-4ກ</u>.

*"[1]ຂ້າແດ່ພຣະຜູ້ເປັນເຈົ້າ ຂໍໂຜດຄຸ້ມຄອງຂ້ານ້ອຍມາເພິ່ງພຣະອົງເພື່ອຄວາມປອດພັຍ. [2]ຂ້ານ້ອຍທູນຕໍ່ພຣະອົງວ່າ "ພຣະອົງແມ່ນພຣະຜູ້ເປັນເຈົ້າຂອງຂ້ານ້ອຍ ທຸກສິ່ງທີ່ດີແມ່ນຂອງພຣະອົງຊົງປະທານໃຫ້" [3]ພວກທີ່ເຊື່ອພຣະຜູ້ເປັນເຈົ້າເປັນຄົນປະເສີດທີ່ສຸດຂ້ານ້ອຍມີຄວາມດີໃຈຢ່າງໃຫຍ່ຕໍ່ພວກເຂົາ [4]ແຕ່ພວກທີ່ຕິດຕາມພຣະອື່ນກໍຮັບເອົາຄວາມທຸກລຳບາກໃສ່ຕົວເອງ.*

ເມື່ອດາວິດກ່າວວ່າ "ທຸກສິ່ງທີ່ດີແມ່ນຂອງພຣະອົງຊົງປະທານໃຫ້" (ຂໍ້ 2), ເພິ່ນບໍ່ໄດ້ໃຊ້ປໂຍກທີ່ກວມລວມວ່າທຸກສິ່ງທີ່ເພິ່ນມີເປັນສິ່ງທີ່ບໍ່ດີ. ເພິ່ນພຽງຢາກເນັ້ນໜັກຄວາມສຳຄັນຂອງຄວາມຕ່າງກັນວ່າ: ພຣະເຈົ້າເທົ່ານັ້ນທີ່ດີ. ເພາະສະນັ້ນ, ພຣະເຈົ້າເທົ່ານັ້ນທີ່ເປັນກົກເຄົ້າຂອງທຸກສິ່ງດີເໝືອນກັນ. ຂ້າພະເຈົ້າບໍ່ໄດ້ເວົ້າວ່າ ຖ້າສິ່ງໃດຮູ້

ສຶກວ່າບໍ່ດີ, ບໍ່ໄດ້ມາຈາກພຣະເຈົ້າ. ມີຫຼາຍສິ່ງອາດຄືວ່າບໍ່ດີສຳລັບເຮົາ, ແຕ່ພຣະເຈົ້າໃຊ້ສິ່ງເຫຼົ່ານັ້ນພາເຮັດໃຫ້ດີ. ແລະເພາະຄວາມຈຳກັດ, ຂອບເຂດຄວາມເຂົ້າໃຈຂອງເຮົາ, ຊາຕານຊອກຫາໃຊ້ສິ່ງເຫຼົ່ານີ້ເພື່ອປູກຝັງຄວາມສົງສັຍໃນຄວາມດີຂອງພຣະເຈົ້າລົງໃນໃຈເຮົາ.

ພຣະຄັມພີຄໍ້າປະກັນເຮົາວ່າທຸກສິ່ງນຳມາໃຊ້ເພື່ອໃຫ້ເກີດຜົນດີໃນເມື່ອເຮົາຮັກພຣະເຈົ້າແລະເອົາພຣະອົງເປັນນິ່ງ (ໂຣມ 8:28-29). ຣິດອຳນາດແລະພຣະກຳລັງຂອງພຣະເຈົ້າສາມາດຫັນປ່ຽນໂຕະແລະປີ້ນຂໍ້ຄວາມຕ່າງໆໄປຫາພຣະປະສົງດີຕາມເຈຕນາຂອງພຣະອົງ. ແຕ່ພຣະສັນຍາໃນ ໂຣມ 8:28-29 ບໍ່ໄດ້ນຳໃຊ້ໃນທຸກໆສະຖານະການ. ມັນນຳໃຊ້ກັບ "ຜູ້ທີ່ຮັກພຣະເຈົ້າ" ແລະດຳເນີນຊີວິດ "ຕາມພຣະປະສົງຂອງພຣະອົງ." ແປວ່າ: ນຳໃຊ້ກັບຜູ້ເອົາພຣະເຈົ້າກ່ອນ.

ແລ້ວເປັນຫຍັງພວກເຮົາຈິ່ງບໍ່ຢາກເອົາພຣະເຈົ້າເປັນນິ່ງ? ບໍ່ພຽງພຣະອົງສາມາດພິກປີ້ນທຸກສິ່ງເທົ່ານັ້ນ, ແຕ່ດັ່ງທີ່ທ່ານຢາໂກໂບບອກເຮົາວ່າ, "ການປະທານອັນດີທຸກຢ່າງ ແລະຂອງປະທານອັນດີເລີດທຸກຢ່າງຍ່ອມມາແຕ່ທາງເທິງແລະລົງມາຈາກພຣະບິດາແຫ່ງບັນດາດວງສວ່າງ, ໃນພຣະບິດາບໍ່ມີການປ່ຽນແປງແລະ ບໍ່ມີເງົາເນື່ອງຈາກການຊົງໝູນວຽນ" (ຢາໂກໂບ 1:17). ພຣະເຈົ້າເປັນແຫຼ່ງທີ່ມາຂອງສິ່ງດີທຸກຢ່າງ. ຕົ້ນເດີມຂອງຄຳວ່າລົງມາແມ່ນໃນປະຈຸບັນ; ນີ້ໝາຍຄວາມວ່າ ຂອງປະທານທີ່ "ດີແລະດີເລີດ" ທີ່ພຣະເຈົ້າປະທານໃຫ້ພວກເຮົາຍັງຫຼັ່ງໄຫຼມາສູ່ເຮົາຕໍ່ໄປ.

ບໍ່ວ່າອົອກຊີເຢັນທີ່ເຮົາຫັນໃຈ, ອາຫານທີ່ເຮົາກິນ, ການເຄື່ອນໄຫວຂອງອະວັຍວະຮ່າງກາຍ, ຫຼືຝົນທີ່ເຮັດໃຫ້ດິນຊຸ່ມ, ພຣະເຈົ້າບໍ່ໄດ້ຢຸດຍັ້ງໃນການໃຫ້ສິ່ງດີແກ່ເຮົາ. ທ່ານເຄີຍຄິດບໍ່ວ່າຈະມີຫຍັງເກີດຂຶ້ນ ຖ້າພຣະເຈົ້າອັດຕັນໃນທັນທີທັນໃດຫຼືຢຸດສະງັກຈັກສິບນາທີ? ແມ່ນພຽງແຕ່ຍາມດຽວ, ໂລກຂອງເຮົາກໍຈະເກີດບັນຫາທັນທີ.

ຈົ່ງຈຳໄວ້ວ່າ: ຖ້າບາງສິ່ງດີ, ແຫຼ່ງທີ່ມາແມ່ນພຣະເຈົ້າ. ຖ້າບາງສິ່ງປາກົດວ່າ "ບໍ່ດີ", ແຫຼ່ງທີ່ມາອາດຍັງແມ່ນພຣະເຈົ້າ. ແມ້ກະທັ້ງພວກເຮົາປະເຊີນກັບສິ່ງບໍ່ດີ (ຊົ່ວຮ້າຍ) ເລັກໜ້ອຍ, ມັນເປັນພຽງສິ່ງທີ່ພາໃຫ້ເຮົາທວນລະນຶກເຖິງວ່າສິ່ງດີໆຂອງພຣະເຈົ້າຍັງສືບຕໍ່ຫຼັ່ງໄຫຼມາ. ໃນທີ່ສຸດ, ຣັສມີອັນຮຸ່ງເຮືອງດັ່ງແສງເພັດທີ່ຮຸ່ງທີ່ສຸດຈະສາດສ່ອງໃສ່ຜ້າສາກຂອງຜ້າກັ້ງສີດຳນັ້ນ.

***ເວລາໃດທ່ານຖືກຈ່ອງດຶງໃຫ້ຫັນໄປເຊື່ອສິ່ງທີ່ຢູ່ຂ້າງອົງພຣະຜູ້ເປັນເຈົ້າ?***

## 3. <u>ເພງສັຣເສີນ 16:9-11</u>.

*[9]ດັ່ງນັ້ນ ຂ້ານ້ອຍຈຶ່ງເຕັມໄປດ້ວຍຄວາມສຸກ ແລະ ຄວາມມ່ວນຊື່ນ ພ້ອມທັງມີຄວາມຮູ້ສຶກສະບາຍໃຈ ຢູ່ເລື້ອຍໆ*
*[10]ເພາະພຣະອົງຈະບໍ່ຊົງນຳຂ້ານ້ອຍເຂົ້າໄປສູ່ພິພົບຄົນຕາຍ ພຣະອົງຈະບໍ່ປະປ່ອຍໃຫ້ຜູ້ທີ່ພຣະອົງຮັກເຂົ້າໄປໃນ*
*ບ່ອນເລິກລັບນັ້ນ [11]ພຣະອົງຊົງຊີ້ໃຫ້ຂ້ານ້ອຍເຫັນຫົນທາງຊຶ່ງນຳໄປສູ່ຊີວິດ ພຣະພັກຂອງພຣະອົງທຳໃຫ້ຂ້ານ້ອຍ*
*ເຕັມໄປດ້ວຍຄວາມມ່ວນຊື່ນ ແລະຄວາມຊົດຊ່ອຍຂອງພຣະອົງກໍນຳຄວາມຍິນດີມາໃຫ້ຕລອດໄປ.*

ພວກເຮົາສ່ວນຫຼາຍ ຜ່ານຜ່າຊີວິດໂດຍຫວັງຈະຮູ້ວ່າຕົນຈະໄປໃສ. ພວກເຮົາໃຊ້ເງິນຊື້ແອັບລາຄາແພງເພື່ອຊ່ອຍເຮົາຫາເສັ້ນທາງຜ່ານສິ່ງທີ່ວົນວຽນສັບສົນຂອງຊີວິດຢ່າງສະບາຍດັ່ງມືອາຊີບ. ລອງເບິ່ງການໄປທ່ຽວຕ່າງປະເທດຫຼືສະຖານທີ່ຕ່າງໆບ່ອນທີ່ກຳລັງແປງທາງຢູ່, ຢ່າງໃດກໍຕາມ, ທ່ານສາມາດຮູ້ໄດ້ຢ່າງວ່ອງໄວວ່າທ່ານບໍ່ສາມາດອາສັຍແອັບ (app) ຂອງທ່ານໄດ້ອີກຕໍ່ໄປ. ຫຼັກການນີ້ແນ່ນອນກໍຈະຖືກນຳໄປໃຊ້ໃນບ່ອນທີ່ເຮົາຢາກໄປໃນຊີວິດຈິງຂອງເຮົາ-ແລະສຳລັບຊີວິດນິຣັນກໍເຊັ່ນດຽວກັນ.

"ທາງ" ຂອງພຣະເຈົ້າບໍ່ແມ່ນພຽງແຕ່ທາງດຽວຂອງຫຼາຍໆທາງທີ່ເຮົາເລືອກໃນຊີວິດຈິງ. ທາງຂອງພຣະເຈົ້າແມ່ນທາງດຽວທີ່ພາໄປເຖິງທັງ "ຄວາມສຸກສົມບູນໃນປະຈຸບັນແລະຄວາມມ່ວນຊື່ນຖາວອນ" ໃນພາຍໜ້າ. ພຣະເຢຊູໄດ້ຊີ້ແຈງຄວາມສຳຄັນຂອງການຮູ້ຈັກທາງແລະການເລືອກທາງຂອງພຣະເຈົ້າເມື່ອພຣະອົງຕັດວ່າ, *"ເຮົານີ້ແຫຼະເປັນທາງ*

*ນັ້ນ, ເປັນຄວາມຈິງ ແລະເປັນຊີວິດ, ບໍ່ມີໃຜມາເຖິງພຣະບິດາໄດ້ ນອກຈາກຈະມາທາງເຮົາ” (ໂຢຮັນ 14:6).* ພຣະເຢຊູບໍ່ພຽງແຕ່ຮູ້ຈັກທາງ; ພຣະອົງຊົງເປັນທາງ. ພຣະອົງເປັນແຜນທີ່ GPS ຂອງເຮົາແລະບ່ອນທີ່ເຮົາສແວງຫາແມ່ນພຣະອົງ.

ເວລາເຮົາປັບຊີວິດຂອງເຮົາຢູ່ໃຕ້ພຣະເຢຊູ, ພຣະອົງຈະພາເຮົາໄປບ່ອນທີ່ເຮົາຢາກໄປ. ພຣະອົງເປີດປະຕູທັງຫຼາຍຊຶ່ງເຮົາບໍ່ມີຄວາມສາມາດເຄາະໃນເມື່ອກ່ອນ. ພຣະອົງເອົາຊະນະອຸປສັກທີ່ເຮົາພຍາຍາມຮື້ອອກ. ພຣະອົງເຮັດໃຫ້ທະເລຊຶ່ງເບິ່ງເໝືອນວ່າຍາກທີ່ຈະຜ່ານຜ່າດ້ວຍຕົວເຮົາເອງນັ້ນໃຫ້ງຽບສງົບລົງ. ພຣະອົງເປັນທາງສູ່ຊີວິດຄົບບໍຣິບູນໃນໂລກນີ້ ແລະພຣະອົງຊົງເປັນທາງສູ່ຊີວິດນິຣັນອີກດ້ວຍ.

ຊີວິດນິຣັນເປັນຂອງປະທານໂດຍການວາງໃຈເຊື່ອຢ່າງດຽວໃນພຣະຄຣິດອົງດຽວເທົ່ານັ້ນເພື່ອລົດໃຊ້ຄວາມຜິດບາບຂອງເຮົາ. ດ້ວຍເຫດນີ້ ພຣະທັມຂ່າວປະເສີດຈຶ່ງຖືກເອີ້ນວ່າ “ຂ່າວດີ.” ຂ່າວດີຂອງພຣະທັມຂ່າວປະເສີດແມ່ນພວກເຮົາບໍ່ຈຳເປັນຕ້ອງລົດໃຊ້ບາບຈັກແນວ. ພຣະເຢຊູເປັນທາງນັ້ນ. ພຣະອົງຊົງເປັນຂອງປະທານ (gift) ນັ້ນ.

ພຣະບັນຍັດສິບປະການບໍ່ໄດ້ປະທານໃຫ້ເພື່ອເປັນທ່ອນເຂົ້າສູ່ຊີວິດນິຣັນ. ຂນະດຽວກັນ ມັນກໍເປັນຄວາມຈິງວ່າພຣະເຈົ້າຄາດຫວັງໃຫ້ເຮົາເຮັດຕາມຂໍ້ຄຳສັ່ງຂອງພຣະອົງ, ພຣະປະສົງສຸດທ້າຍຂອງພຣະບັນຍັດ ແມ່ນເພື່ອສະແດງວ່າເຮົາບໍ່ສາມາດຮັກສາພຣະບັນຍັດເຫຼົ່ານັ້ນໄດ້. ເວົ້າອີກຢ່າງນຶ່ງວ່າ, ມັນເປີດເຜີຍຄວາມຕ້ອງການພຣະຜູ້ໂຜດໃຫ້ພົ້ນຂອງເຮົາ. ພວກເຮົາຖືກປົດປ່ອຍເປັນອິສຣະຈາກກົດບັນຍັດ ແລະ ການລົງໂທດໂດຍຂອງປະທານຄວາມພົ້ນໃນພຣະເຢຊູ. ເຣື່ອງນີ້ພາໃຫ້ເຮົາຍິນຍອມແລະພ້ອມໃຈໃຊ້ຊີວິດໃຫ້ເປັນທີ່ພໍພຣະທັຍພຣະເຈົ້າໂດຍການຈັດພຣະອົງເປັນອັນດັບນຶ່ງໃນຊີວິດ.

***ມີທາງໃດແດ່ທີ່ກຸ່ມເຮົາໄດ້ຊ່ອຍທ່ານຄົ້ນພົບເສັ້ນທາງຂອງພຣະເຈົ້າສຳລັບຊີວິດທ່ານ?***

## ນຳໃຊ້ໃນຊີວິດ

ທ່ານສແວງຫາການຖືເອົາພຣະເຈົ້າເປັນອັນດັບນຶ່ງໃນຊີວິດທ່ານຢ່າງໃດ? ຈົ່ງເລືອກເອົາການນຳໃຊ້ຂໍ້ນຶ່ງຕໍ່ໄປນີ້:

- **ຈົ່ງຮຽນຮູ້.** ຈຸດເລີ່ມຕົ້ນສຳລັບການປ່ຽນແປງເລີ່ມຕົ້ນດ້ວຍການຮູ້ວ່າແມ່ນຫຍັງຄວນປ່ຽນ. ຖ້າມີບ່ອນໃດໃນຊີວິດທ່ານທີ່ບໍ່ໄດ້ໃຫ້ພຣະເຈົ້າເປັນອັນດັບນຶ່ງ, ຈົ່ງສາຣະພາບສິ່ງນັ້ນຕໍ່ພຣະເຈົ້າ. ຈົ່ງທູນຂໍການໃຫ້ອະພັຍ ແລະການຊ່ອຍເຫຼືອໃນການຈັດພຣະອົງໄວ້ໃນອັນດັບນຶ່ງຂອງຄວາມຄິດ, ຄຳເວົ້າ, ແລະການກະທຳຂອງທ່ານ.
- **ຈົ່ງເລີ່ມຕົ້ນ.** ຈົ່ງປະຕິຍານຕົນແຕ່ລະວັນໂດຍການເອົາພຣະເຈົ້າເປັນອັນດັບນຶ່ງ. ທ່ານສາມາດພັທນາອຸປນິສັຍການຈັດພຣະເຈົ້າເປັນອັນດັບນຶ່ງໃຫ້ໜັກແໜ້ນກວ່າເກົ່າໂດຍການເຕືອນສະຕິຕົວເອງໃນຄວາມຈິງນີ້ກ່ອນທ່ານຈະເລີ່ມຕົ້ນແຕ່ລະວັນ. ອາດໝາຍເຖິງການອະທິຖານໃນເວລາທ່ານຕື່ນຂຶ້ນຄັ້ງແລກ, ການອ່ານພຣະຄັມພີກ່ອນທ່ານຈະເຮັດສິ່ງອື່ນໆ.
- **ຈົ່ງຕິດຕາມ.** ຈົ່ງໃຊ້ເຈັ້ຍບັນທຶກ ຫຼື ປຶ້ມບັນທຶກໃນອາທິດນີ້ໃນບ່ອນທ່ານຈະຈົດບັນທຶກທຸກຄັ້ງທີ່ທ່ານເຫັນການຈັດວາງເຈຕນາແລະການນຳພາຂອງພຣະເຈົ້າໄວ້ເປັນອັນດັບນຶ່ງໃນຊີວິດຂອງທ່ານ. ທ່ານອາດຢາກແບ່ງປັນສິ່ງນີ້ກັບເພື່ອນຄົນນຶ່ງເພື່ອເປັນການໜູນໃຈໃຫ້ເພື່ອນຂອງທ່ານເຮັດດັ່ງດຽວກັນ.

ພວກເຮົາທຸກຄົນລ້ວນແຕ່ພາດຫວັງນຳເວລາ ແລະສະພາບການທີ່ສາມາດນຳເຮົາສູ່ຂໍ້ຜູກມັດຕ່າງໆ. ເຖິງຢ່າງໃດກໍຕາມ, ການຈັດພຣະເຈົ້າໄວ້ອັນດັບນຶ່ງເປັນກຸນແຈໃນການຈັດລະບຽບຊີວິດຂອງພວກເຮົາ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ http://lsbf.us ໂດຍ PSI**